**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 12 ມີນາ 2023 (03-12-2023)**

---

## ພຣະເຢຊູໄດ້ກໍ່ຕັ້ງຊີວິດຂອງຂ້າພະເຈົ້າຂຶ້ນໃໝ່

*ເມື່ອໃດທີ່ທ່ານໄດ້ຂອບໃຈທີ່ໄດ້ຮັບການຊ່ວຍກູ້ຈາກສະພາບການທີ່ຊ່ວຍບໍ່ໄດ້?*

**ຈຸດສຳຄັນໃນບົດຮຽນ:** ພຣະເຢຊູໄດ້ກໍ່ຕັ້ງສິ່ງທີ່ແຕກຫັກໃນຊີວິດຂອງຂ້າພະເຈົ້າຂຶ້ນໃໝ່.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃນປີ 2004 ລູກສາວຂອງພວກເຮົານາງ ແຫດລີ (**Hadley**) ໄດ້ເກີດ. ເນື່ອງຈາກສະພາບສຸຂພາບເບື້ອງຕົ້ນ, ນາງເກີດມາມີນ້ຳໜັກພຽງແຕ່ 15.5oz(ອາວສ໌). ໃນລະຍະ 108 ມື້ຕໍ່ໄປພວກເຮົາໄດ້ຕົກຢູ່ໃນສະພາບຂັບຂັນທີ່ຢູ່ລະຫ່ວາງການມີຊີວິດແລະຄວາມຕາຍ. ບາງມື້ທ່ານໝໍມີຂ່າວດີມາເຫຼົ່າສູ່ຟັງກ່ຽວກັບຄວາມຄືບໜ້າຂອງນາງ, ແລະອີກບາງມື້ພວກເຮົາກໍມາຮອດ NICU ພຽງແຕ່ໄດ້ຮັບການທັກທາຍດ້ວຍຂ່າວທີ່ເຮັດໃຫ້ທໍ້ຖອຍໃຈ, ມີຈຸດນຶ່ງໃນລະຫ່ວາງເສັ້ນທາງນັ້ນ ລູກສາວຂອງພວກເຮົາໄດ້ຕິດເຊື້ອພະຍາດທີ່ເຮັດໃຫ້ເກີດພະຍາດແຊກຊ້ອນ. ພວກທ່ານໝໍຂອງພວກເຮົາໄດ້ແບ່ງປັນກັບພວກເຮົາວ່າບໍ່ມີຫຍັງອີກແລ້ວທີ່ທາງແພດຈະສາມາດຊ່ວຍນາງໄດ້. ພວກເຮົາກໍພຽງແຕ່ໄດ້ຄອງຄອຍແລະລໍເບິ່ງວ່າແມ່ນຫຍັງຈະເກີດຂື້ນ.

ການໄດ້ຍິນຄຳເວົ້າເຫຼົ່ານັ້ນອາດເຮັດໃຫ້ທ່ານທັນໃຈຍາກ. ພວກເຮົາໄດ້ໄປເຖິງຈຸດສຸດທ້າຍຂອງການເລືອກທາງການແພດ, ແຕ່ພວກເຮົາພຽງແຕ່ໄດ້ເລີ້ມຕົ້ນຊອກຫາສິ່ງທີ່ພຣະເຈົ້າສາມາດກະທຳໄດ້. ຫຼາຍອາທິດຜ່ານພົ້ນໄປ, ພວກເຮົາໄດ້ຮຽນຮູ້ການອ້ອນວອນອະທິຖານທີ່ບໍ່ເຄີຍມີມາກ່ອນ, ແລະນັ້ນຄືສິ່ງທີ່ພວກເຮົາໄດ້ເຮັດ. ພຣະເຈົ້າໄດ້ຊົງປາກົດໃຫ້ເຫັນ. ໃນເວລາທີ່ພວກເຮົາພົບກັບຄວາມສິ້ນຫວັງ, ພວກເຮົາໄດ້ຫັນໄປຫາຜູ້ດຽວທີ່ສາມາດຕອບສນອງຄວາມຕ້ອງການຂອງພວກເຮົາໄດ້, ແລະພຣະອົງກໍໄດ້ຊົງກະທຳການ.

**ພຣະຄຳພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3, )

**<u>ສຶກສາພຣະຄັມພີ</u>**

### 1. ໂຢຮັນ 5:2-7

***2.*** *ໃນກຸງເຢຣູຊາເລັມທີ່ຮີມປະຕູແກະມີສະໜ່ວຍນຶ່ງ ພາສາເຮັບເຣີເອີ້ນສະນັ້ນວ່າເບດຊະທາ ມີສາລາອ້ອມຢູ່ຫ້າຫລັງ. 3. ໃນສາລາເຫລົ່ານັ້ນມີຄົນປ່ວຍເປັນຈຳນວນຫລາຍ ຄືຄົນຕາບອດ, ຄົນຂາເສັ້ງ, ແລະຄົນອົງຄະລີບນອນຢູ່ [ຄອຍຖ້ານ້ຳເຟືອນ. 4. ດ້ວຍວ່າມີເທວະດາຕົນນຶ່ງຂອງພຣະຜູ້ເປັນເຈົ້າລົງມາກວນນ້ຳສະນັ້ນເປັນຍາມໆ ແລະເມື່ອນ້ຳເຟືອນຜູ້ໃດລົງໄປໃນນ້ຳກ່ອນກໍຫາຍຈາກພະຍາດທີ່ຕົນເປັນຢູ່ນັ້ນ.] 5. ທີ່ນັ້ນມີຊາຍຄົນນຶ່ງປ່ວຍຢູ່ໄດ້ສາມສິບແປດປີມາແລ້ວ. 6. ເມື່ອພຣະເຢຊູຊົງເຫັນຄົນນັ້ນນອນຢູ່ ແລະຊົງຊາບວ່າລາວເປັນຢູ່ຢ່າງນັ້ນເຫິງແລ້ວ. 7. ພຣະອົງຈຶ່ງຊົງຖາມວ່າ, "ເຈົ້າຢາກດີຫລື." ຄົນປ່ວຍນັ້ນຈຶ່ງທູນວ່າ, "ນາຍເອີຍ, ເວລານ້ຳເຟືອນຂຶ້ນບໍ່ມີໃຜຈະເອົາຂ້ານ້ອຍລົງໄປໃນສະ ແລະເມື່ອຂ້ານ້ອຍກຳລັງລົງໄປຄົນອື່ນກໍລົງໄປກ່ອນແລ້ວ."*

ພວກເຮົາບໍ່ໄດ້ຂໍ້ມູນຫັຼງຫຼາຍກ່ຽວກັບສະໜ່ວຍນຶ່ງທີ່ຊື່ວ່າເບດຊະທາ, ແຕ່ມັນໄດ້ຢູ່ໃກ້ທີ່ປະຕູແກະ. ທີ່ນີ້ພຣະເຢຊູໄດ້ມາ, ອົງເປັນພຣະເມສານ້ອຍ(ແກະ)ຂອງພຣະເຈົ້າ (ໂຢຮັນ 1:29) ໄດ້ມາທີ່ປະຕູແກະນັ້ນເພື່ອຊ່ວຍຊີວິດຂອງຊາຍຄົນນຶ່ງແລະເພື່ອເປີດເຜີຍພຣະອົງເອງວ່າເປັນພຣະຜູ້ລ້ຽງທີ່ດີ (ໂຢຮັນ 10:11). ພວກເຮົາຮູ້ວ່າສະນ້ຳແຫ່ງນີ້ແມ່ນບ່ອນທີ່ຄົນເຈັບແລະຄົນພິການມາເຕົ້າໂຮມກັນ, ແລະໃນບາງຈຸດທີ່ຜ່ານກາຍມາ, ແລະສິ່ງທີ່ສຳຄັນຕ້ອງໄດ້ເກີດຂຶ້ນຢູ່ໃນສະນ້ຳແຫ່ງນີ້ຈົນມີຊື່ສຽງວ່າເປັນບ່ອນປິ່ນປົວຄົນເຈັບ. ເມື່ອເວລາຜ່ານໄປ, ມັນໄດ້ກາຍເປັນສະຖານທີ່ຄິດວ່າມັນເປັນບ່ອນສັກສິດ, ເມື່ອນ້ຳປັ່ນປ່ວນ, ມັນມີຣິດອຳນາດເຮັດໃຫ້ດີພະຍາດໄດ້.

ພຣະເຢຊູໄດ້ພົບຊາຍຄົນນຶ່ງທີ່ເຊື່ອວ່າພະລັງຂອງນໍ້າສາມາດປິ່ນປົວພະຍາດໄດ້ເມື່ອນໍ້າສັ່ນເພືອນ. ລາວມີບັນຫາເຣື່ອງສຸຂພາບຂອງລາວບໍ່ສາມາດເຄື່ອນໄຫວຕົວເອງໄດ້ຢ່າງເຕັມທີ່. ເຊັ່ນດຽວກັບຜູ້ຍິງຊາວຊາມາເຣັຽທີ່ນໍ້າສ້າງທີ່ພວກເຮົາໄດ້ສຶກສາໃນອາທິດຜ່ານມາ, ຊາຍຄົນນີ້ຍັງເຂົ້າໃຈຜິດໃນຄວາມປາຖນາສູງສຸດຂອງລາວ. ຍິງຊາວຊາມາເຣັຽຄິດວ່າຄວາມຕ້ອງການອັນຍິ່ງໃຫ່ຽທີ່ສຸດຂອງລາວແມ່ນນໍ້າດື່ມ. ແລະຊາຍຄົນນີ້ຄິດວ່າຄວາມຕ້ອງການທີ່ໃຫ່ຽທີ່ສຸດຂອງລາວແມ່ນມີຄົນມາຊ່ວຍເອົາລາວລົງໄປໃນນໍ້າ. ໃນທັງສອງກໍລະນີນີ້ພວກເຂົາທັງສອງໄດ້ພົບກັບພຣະເຢຊູຜູ້ດຽວທີ່ສາມາດຊ່ວຍພວກເຂົາໄດ້. ໃນກໍລະນີຂອງຜູ້ຊາຍຄົນນີ້ລາວໄດ້ຮັບການທົນທຸກທໍຣະມານມາສາມສິບແປດປີ. ພວກເຮົາບໍ່ໄດ້ຖືກບອກວ່າຖ້າຜູ້ຊາຍຄົນນີ້ອາຍຸສາມສິບແປດປີແລະໄດ້ທົນທຸກຈາກການເປັນລ່ອຍຕລອດທັງຊີວິດຂອງລາວ ຫຼືຖ້າຫາກວ່າລາວໄດ້ປ່ວຍເປັນລ່ອຍໃນເວລາຕໍ່ມາ. ໃນກໍລະນີໃດກໍຕາມ, ຜູ້ຊາຍຄົນນີ້ໄດ້ຮູ້ຈັກດີກັບຄວາມທຸກທໍຣະມານນີ້.

*ທ່ານໄດ້ພົບຫຍັງທີ່ສຳຄັນທີ່ສຸດກ່ຽວກັບເຫດການອັນນີ້?*

ພຣະເຢຊູຮູ້ວ່າອາການພະຍາດຂອງຊາຍຄົນນັ້ນເປັນແນວໃດແລະລາວໄດ້ທົນທຸກດົນປານໃດແລ້ວ. ການພົບພຣະເຢຊູຂອງຊາຍຄົນນີ້ບໍ່ແມ່ນເຫດບັງເອີນ. ແຕ່ດ້ວຍຄວາມເມດຕາສົງສານ ພຣະເຢຊູໄດ້ຖາມລາວວ່າ " ເຈົ້າຢາກດີຫຼື?" (ຂໍ້ 6). ຄົນອາດຈະຄິດວ່າຄຳຕອບງ່າຍໆກໍຄື "ຢາກດີ!" ແຕ່ວ່າ, ກໍເໝືອນດັ່ງທີ່ພວກເຮົາມັກເຮັດຢູ່ເລື້ອຍໆນັ້ນແຫຼະ, ຊາຍຄົນນັ້ນໄດ້ໃຫ້ຄຳແກ້ຕົວຕໍ່ພຣະຜູ້ເປັນເຈົ້າເທົ່ານັ້ນ. ລາວກ່າວໂທດຄົນອື່ນສຳລັບຄວາມສິ້ນຫວັງຂອງລາວ. ຂ້າພະເຈົ້າພາດໂອກາດຫຼາຍໆຄັ້ງໃນຊີວິດຈາກພຣະພອນຂອງພຣະເຈົ້າເພາະຂ້າພະເຈົ້າແກ້ໂຕຈາກຄວາມບາບຂອງຕົວເອງ, ຄວາມລົ້ມເຫຼວຂອງຂ້າພະເຈົ້າ, ຫຼືສະຖານະການຂອງຂ້າພະເຈົ້າຄວນທີ່ຈະໂຕ້ຕອບຕໍ່ພຣະເຈົ້າດ້ວຍຄວາມຖ່ອມຕົວ. ຄືກັນກັບທີ່ພຣະອົງໄດ້ກະທຳກັບຊີວິດຂອງພວກເຮົາໃນທຸກມື້ນີ້. ພຣະເຢຊູໄດ້ເມີນເສີຍກັບຂໍ້ແກ້ຕົວຂອງຊາຍຄົນນັ້ນແລະກ້າວເຂົ້າໄປດ້ວຍຣິດເດດແລະພຣະຄຸນຂອງພຣະອົງ. ພຣະອົງຊົງແສນດີກັບພວກເຮົາຄືແນວນັ້ນ. ພຣະອົງຊົງພົບພວກເຮົາໃນບ່ອນທີ່ເຮົາຢູ່ໃນຄວາມສິ້ນຫັວງແລະຊົງຕອບສນອງໃນສິ່ງທີ່ພວກເຮົາຕ້ອງການ.

*ເປັນຫຍັງພຣະເຢຊູຈຶ່ງຖາມຊາຍຄົນນັ້ນວ່າ, "ເຈົ້າຢາກຫາຍດີຫຼື?"*

## 2. ໂຢຮັນ 5:8-11

*8. ພຣະເຢຊູຊົງບອກຄົນນັ້ນວ່າ, "ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າຍ່າງໄປ." 9. ໃນທັນໃດນັ້ນຊາຍຄົນນັ້ນກໍດີພະຍາດ ຈຶ່ງຍົກເອົາບ່ອນນອນຂອງຕົນແລ້ວຍ່າງໄປ. 10. ວັນນັ້ນເປັນວັນຊະບາໂຕ ດັ່ງນັ້ນພວກຢິວຈຶ່ງເວົ້າກັບຄົນທີ່ຖືກຊົງບັນດານໃຫ້ດີພະຍາດນັ້ນວ່າ, "ວັນນີ້ເປັນວັນຊະບາໂຕທີ່ເຈົ້າຈະຍົກເອົາບ່ອນນອນຂອງເຈົ້າໄປກໍຜິດພຣະບັນຍັດ." 11. ຄົນນັ້ນຈຶ່ງຕອບເຂົາວ່າ, "ຜູ້ທີ່ໃຫ້ຂ້ານ້ອຍດີພະຍາດນັ້ນໄດ້ບອກຂ້ານ້ອຍວ່າ, 'ຈົ່ງຍົກເອົາບ່ອນນອນຂອງເຈົ້າຍ່າງໄປ'."*

ຕໍ່ຈາກນັ້ນມັນກໍໄດ້ເກີດຂຶ້ນ! ຫຼັງຈາກສາມສິບແປດປີຂອງຄວາມທຸກທໍຣະມານ, ຊີວິດຂອງຊາຍຄົນນີ້ໄດ້ຖືກປ່ຽນແປງໂດຍຜູ້ປິ່ນປົວທີ່ມີຣິດອຳນາດດ້ວຍຄຳເວົ້າທີ່ວ່າ, "ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າໄປ." ຄວາມເຈັບປ່ວຍແລະຄວາມທຸກທໍຣະມານໄດ້ຫາຍໄປ. ພຣະເຢໂຫວາ-ຣາຟາໄດ້ກ່າວເຊັ່ນນັ້ນ, ແລະຊາຍຄົນນັ້ນກໍຫາຍດີໃນທັນທີພຽງພິບຕາດຽວ.

ພຣະເຢໂຫວາ-ຣາຟາຊື່ນີ້ໃນພາສາເຮັບເຣີມີຄວາມໝາຍວ່າ "ພຣະຜູ້ເປັນເຈົ້າຊົງປິ່ນປົວຂ້ານ້ອຍ." ຊື່ນີ້ຖືກນຳໃຊ້ໂດຍພຣະເຈົ້າຄັ້ງທຳອິດໃນເວລາທີ່ຊາວອິສຣາເອັນຢູ່ໃນຖິ່ນແຫ້ງແລ້ງກັນດານ (ອົບພະຍົບ 15:26) ແລະຄ້າຍຄືຫຼາຍກັບຜູ້ຊາຍຄົນນີ້ທີ່ນອນເລືອຢູ່ແຄມສະນໍ້າ. ຊາວອິສຣາເອັນໄດ້ພົບການປິ່ນປົວຂອງພວກເຂົາຢູ່ໃນນໍ້າຂົມມາຣາ. ມັນຢູ່ທີ່ນັ້ນທີ່ພຣະເຈົ້າໄດ້ປ່ຽນນໍ້າດື່ມຈາກນໍ້າຂົມເປັນນໍ້າຫວານແລະໃຫ້ຄຳສັນຍາກ່ຽວກັບສຸຂພາບແລະການປິ່ນປົວ. ສິ່ງທີ່ຊາວອິສຣາເອັນຕ້ອງການແມ່ນນໍ້າດື່ມເພື່ອຄວາມຍືນຍົງຂອງພວກເຂົາໃນຕອນນັ້ນ. ສິ່ງທີ່ພຣະເຈົ້າຈັດຫາໃຫ້ແມ່ນນໍ້າທີ່ຈະຊ່ວຍຊີວິດຂອງພວກເຂົາໃຫ້ຍືນຍົງຢູ່ໄດ້ໃນຊ່ວງນັ້ນ ແລະຄຳສັນຍາທີ່ຈະໃຫ້ພວກເຂົາຍືນຍົງຄົງຢູ່ຕໍ່ໄປໃນອານາຄົດ.

ທີ່ສະນໍ້າເບດຊະທາຄຳຂໍຮ້ອງຂອງຊາຍຜູ້ນີ້ແມ່ນງ່າຍດາຍຄືຢາກໄດ້ຮັບການຊ່ວຍເຫຼືອໃຫ້ນຳເຂົາລົງໄປໃນນໍ້າ. ແທນທີ່ຈະເຮັດຕາມຄຳຂໍຮ້ອງຂອງຊາຍຄົນນີ້, ພຣະເຢຊູໄດ້ຕອບສນອງຄວາມຕ້ອງການຂອງລາວ. ພຣະເຈົ້າມີຄວາມເກັ່ງກາດເກີນຄວາມຄາດຫວັງ

ທີ່ພວກເຮົາມີ. ເມື່ອພວກເຮົາມີຄວາມເຊື່ອໃນພຣະຄຣິດ, ພວກເຮົາເກີດຄວາມປລາດໃຈຕໍ່ຄວາມຮັກອັນເລີກເຊິ່ງທີ່ພຣະອົງມີຕໍ່ພວກເຮົາ. ພວກເຮົາບໍ່ສາມາດຈິນຕະນາການໃນສາຍຕາອັນສັ້ນໆໃນຄວາມຄາດຫັວງຂອງພວກເຮົາ. ເຊັ່ນດຽວກັບຍິງຊາວຊາມາເຣັຽແລະຜູ້ຊາຍປ່ວຍທີ່ນອນຢູ່ແຄມສະນ້ຳເບດຊະທາ, ບາງເວລາພວກເຮົາກໍຂາດການສັງເກດເຫັນ "ຂອງຂວັນຂອງພຣະເຈົ້າ" (ໂຢຮັນ 4:10), ຜູ້ທີ່ພວກເຮົາມີສ່ວນຮ່ວມໃນສາຍສຳພັນ.

ຊາຍຄົນນີ້ໄດ້ລໍຖ້າສາມສິບແປດປີເພື່ອຈະໄດ້ຮັບການປິ່ນປົວ, ແຕ່ໄດ້ຖືກປິ່ນປົວ "ຜິດມື້." ນັ້ນແມ່ນມຸມມອງທີ່ພວກຜູ້ນຳສາສນາໄດ້ເຫັນ. ພຣະເຢຊູໄດ້ປິ່ນປົວຊາຍຄົນນີ້ໃນວັນຊະບາໂຕ. ອັນນີ້ບໍ່ໄດ້ຂັດກັບກົດບັນຍັດທີ່ພຣະເຈົ້າມອບໃຫ້, ແຕ່ມັນຂັດກັບກົດລະບຽບທີ່ພວກຜູ້ນຳຊາວຢິວໄດ້ຕັ້ງຂຶ້ນ. ພວກເຂົາຕັ້ງຂໍ້ກຳນົດຂອງ "ກົດລະບຽບ" ກ່ຽວກັບສິ່ງທີ່ສາມາດແລະບໍ່ສາມາດເຮັດໄດ້ໃນວັນຊະບາໂຕ.

ພຣະເຢຊູບໍ່ໄດ້ລືມໄປວ່າວັນນີ້ເປັນວັນຊະບາໂຕ. ພຣະອົງຮູ້ວ່າພຣະອົງກຳລັງເຮັດຫັຽງ. ທຳນຽມການປະຕິບັດຂອງ "ການລະເມີດກົດບັນຍັດ" ນີ້ຈະເປັນຫົວຂໍ້ຂອງການຂັດແຍ້ງຂອງພຣະເຢຊູກັບຜູ້ນຳຊາວຢິວໃນໂຢຮັນບົດທີ່ສີ່. ບັນຫາຂອງສິດອຳນາດກັບສິ່ງທີ່ໄດ້ເກີດຂຶ້ນນັ້ນບໍ່ແມ່ນວິທີທີ່ຊາຍເປັ້ຽຄົນນີ້ໄດ້ຮັບການປິ່ນປົວຫຼືຜູ້ທີ່ໄດ້ປິ່ນປົວລາວ. ພວກເຂົາບໍ່ພໍໃຈໃນການທີ່ລາວໄດ້ຍົກເອົາບ່ອນນອນອອກໄປ! ພວກເຂົາໄດ້ຖືວ່ານີ້ກໍແມ່ນການເຮັດວຽກ. ສັງເກດໃຫ້ເຫັນວ່ານີ້ຂາດຄວາມເມດຕາ, ຜູ້ນຳຊາວຢິວບໍ່ໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ຄວາມທຸກທໍຣະມານຂອງຊາຍຄົນນີ້. ແຕ່ພວກເຂົາໄດ້ຮັບຄວາມເຄືອງໃຈຢ່າງໜັກຈາກ "ວຽກ" ຂອງລາວ. ພວກເຮົາສາມາດຂອບພຣະຄຸນພຣະເຢຊູທີ່ມີຄວາມເມດຕາສົງສານ; ພຣະອົງບໍ່ເຄີຍເບິ່ງຂ້າມສະພາບຂອງພວກເຮົາ. ພຣະເຢຊູໄດ້ເຫັນຄວາມຕ້ອງການທີ່ແທ້ຈິງຂອງຜູ້ຊາຍຄົນນີ້ແລະພຣະອົງກໍເຫັນສະພາບຂອງພວກເຮົາທຸກຄົນເຊັ່ນດຽວກັນ.

*ຊີວິດກັບພຣະຄຣິດເກີນຄວາມຄາດໝາຍຂອງທ່ານຢ່າງໃດ?*

## 3. ໂຢຮັນ 5:19-21

*19. ພຣະເຢຊູຊົງກ່າວກັບເຂົາວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າພຣະບຸດຈະກະທຳສິ່ງໃດຕາມໃຈບໍ່ໄດ້ນອກຈາກທີ່ໄດ້ເຫັນພຣະບິດາຊົງກະທຳເພາະສິ່ງໃດທີ່ພຣະບິດາຊົງກະທຳສິ່ງນັ້ນແຫລະ, ພຣະບຸດຈຶ່ງຊົງກະທຳເໝືອນກັນ. 20. ເພາະວ່າພຣະບິດາຊົງຮັກພຣະບຸດແລະຊົງສະແດງໃຫ້ພຣະບຸດເຫັນທຸກສິ່ງທີ່ພຣະອົງເອງຊົງກະທຳແລ້ວພຣະອົງຈະຊົງສະແດງໃຫ້ພຣະບຸດເຫັນການໃຫຍ່ກວ່ານັ້ນອີກຊຶ່ງທ່ານທັງຫລາຍຈະອັສຈັນໃຈ. 21. ເພາະພຣະບິດາຊົງບັນດານໃຫ້ຄົນທີ່ຕາຍແລ້ວຄືນມີຊີວິດສັນໃດຖ້າພຣະບຸດປາຖນາຈະບັນດານໃຫ້ຜູ້ໃດມີຊີວິດກໍຈະເຮັດສັນນັ້ນເໝືອນກັນ.*

ຫຼັງຈາກປິ່ນປົວຊາຍຄົນນັ້ນແລ້ວ, ພຣະເຢຊູໄດ້ຖືກຕໍ່ວ່າໂດຍພວກຫົວໜ້າສາສນາ, ເປັນການນຳພຣະເຢຊູໃຫ້ກ່າວຄຳປະກາດທີ່ຊົງພະລັງກ່ຽວກັບພຣະອົງເອງ. ຜົນໄດ້ຂອງການປະກາດຕົວນີ້ແມ່ນສິ່ງທີ່ຍິ່ງໃຫຍ່ທີ່ສຸດທີ່ຈະນຳໄປສູ່ການຄຶງທີ່ໄມ້ກາງແຂນຂອງພຣະອົງ, "ພຣະເຢຊູໄດ້ຊົງຕອບເຂົາວ່າ, "ພຣະບິດາຂອງເຮົາຍັງຊົງກະທຳກິຈການມາຈົນເຖິງບັດນີ້ແລະຝ່າຍເຮົາກໍເຮັດຢູ່ເໝືອນກັນ." (ໂຢຮັນ 5:17). ພຣະເຢຊູໄດ້ອ້າງວ່າພຣະອົງເປັນພຣະເມຊີອາ, ດັ່ງນັ້ນບໍ່ຕ້ອງສົງໃສໃນສິ່ງທີ່ພຣະເຢຊູກຳລັງກ່າວນັ້ນ, ແລະມັນກໍບໍ່ໄດ້ສູນຫາຍຈາກພວກຜູ້ນຳຊາວຢິວ: ພຣະເຢຊູໄດ້ "ເຮັດໃຫ້ຕົນເອງເທົ່າທຽມກັບພຣະເຈົ້າ" (ຂໍ້ 18).

ໃນຂໍ້ 18-21, ພຣະເຢຊູໄດ້ກ່າວໄວ້ສາມຢ່າງທີ່ກ້າຫານກ່ຽວກັບພຣະອົງເອງແລະຄວາມສຳພັນທີ່ເປັນເອກະລັກຂອງພຣະອົງກັບພຣະບິດາ.

1. **ພຣະບຸດຈະກະທຳສິ່ງໃດຕາມໃຈບໍ່ໄດ້ນອກຈາກທີ່ໄດ້ເຫັນພຣະບິດາຊົງກະທຳ.** ການເປັນພຣະເຈົ້າໃນເນື້ອໜັງ, ແລະອົງຊົງຮວມກັບພຣະວິນຍານ, ພຣະເຢຊູຊຶ່ງເຫັນໄດ້ຈະແຈ້ງວ່າພຣະບິດາກຳລັງເຮັດຫັຽງ. ທຸກມື້ນີ້ພວກເຮົາສາມາດເຫັນການທຳງານຂອງພຣະເຈົ້າເພາະວ່າເມື່ອພວກເຮົາເປັນຜູ້ທີ່ເຊື່ອ, ພວກເຮົາເປັນທີ່ຊົງສະຖິດຢູ່ຂອງອົງພຣະວິນຍານບໍຣິສຸດ (1ໂກຣິນໂທ 2:10-12).
2. **ພຣະເຢຊູໄດ້ເຮັດທຸກສິ່ງຕາມທີ່ພຣະບິດາໄດ້ຊົງສຳແດງໃຫ້ແກ່ພຣະອົງ.** ພຣະເຢຊູບໍ່ພຽງແຕ່ໄດ້ເຫັນສິ່ງທີ່ພຣະບິດາກຳລັງເຮັດ, ແຕ່ພຣະເຢຊູຄຣິດໄດ້ເຂົ້າຮ່ວມກັບພຣະອົງ. ພຣະເຢຊູຄຣິດໄດ້ມີສ່ວນຮ່ວມກັບພຣະເຈົ້າກໍເພາະເນື່ອງຈາກວ່າຊີວິດ

ແລະຣາຊກິດຂອງພຣະອົງສອດຄ່ອງກັບແຜນການຂອງພຣະບິດາຢ່າງສົມບູນ.

3. **ພຣະເຢຊູມາເພື່ອປະທານຊີວິດ.** ຈຸດປະສົງສູງສຸດທີ່ພຣະເຢຊູສະເດັດເຂົ້າມາໃນໂລກໃນສະພາບຮ່າງກາຍຂອງມະນຸດ(ໂຢຮັນ 1:14) ເພື່ອຊ່ວຍຜູ້ທີ່ຫຼົງເສັຽຫາຍແລະຊ່ວຍກອບກູ້ຊີວິດຜູ້ຫຼົງເສັຽຫາຍ. ພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງເຂົ້າມາໃນໂລກ, ບໍ່ແມ່ນເພື່ອຕັດສິນລົງໂທດ, ແຕ່ມາເພື່ອຊ່ວຍຄົນບາບໃຫ້ລອດພົ້ນ (ໂຢຮັນ 3:17).

ເຊັ່ນດຽວກັບພຣະເຢຊູໄດ້ນຳເອົາການປິ່ນປົວທາງດ້ານຮ່າງກາຍມາສູ່ຊາຍຄົນນີ້ໂດຍຜ່ານທາງປະຕູແກະໂດຍຣິດອຳນາດຂອງພຣະຄຳຂອງພຣະອົງ, ພຣະອົງໄດ້ນຳເອົາການປິ່ນປົວທາງຈິດວິນຍານໃຫ້ພວກເຮົາໂດຍຜ່ານທາງຄວາມຕາຍຂອງພຣະອົງ, ການຖືກຝັງ, ແລະການຟື້ນຄືນຊີວິດ.

*ຄຳເວົ້າເຫຼົ່ານີ້ຂອງພຣະເຢຊູສອນເຮົາຫຍັງແດ່ກ່ຽວກັບສິ່ງສຳຄັນລະດັບນຶ່ງໃນຊີວິດຂອງພວກເຮົາ?*

## ການນຳໃຊ້ໃນຊີວິດ

ພຣະເຢຊູໄດ້ກໍ່ຕັ້ງສິ່ງທີ່ແຕກຫັກໃນຊີວິດຂອງຂ້າພະເຈົ້າຂຶ້ນໃໝ່. ຈົ່ງເລືອກນຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ສັງເກດເບິ່ງ.** ພຣະເຢຊູໄດ້ສັງເກດເບິ່ງສິ່ງທີ່ພຣະບິດາຂອງພຣະອົງກຳລັງເຮັດ. ຂໍຮ້ອງໃຫ້ພຣະເຈົ້າເປີດຕາຂອງທ່ານເບິ່ງຄົນ ແລະຄວາມຕ້ອງການຂອງເຂົາເຫຼົ່ານັ້ນທີ່ຢູ່ອ້ອມໆທ່ານໃນອາທິດນີ້. ທ່ານອາດຈະປລາດໃຈກັບສິ່ງທີ່ທ່ານໄດ້ເຫັນແລະໄດ້ຍິນ.

- **ຈົ່ງຄິດ.** ຄິດກ່ຽວກັບບາງຢ່າງ "ເຣື່ອງຂອງພຣະເຈົ້າ" ທີ່ທ່ານໄດ້ຍິນໃນອາທິດຜ່ານມາ. ພຣະເຈົ້າທຳງານຢູ່ທີ່ໃດ? ພຣະເຈົ້າໃຊ້ໃຜ? ຈົ່ງຂຽນຄວາມເຂົ້າໃຈກ່ຽວກັບເຣື່ອງການທຳງານຂອງພຣະເຈົ້າແລະເປັນພະຍານກ່ຽວກັບວິທີການທີ່ພຣະເຈົ້າທຳງານ. ສັນລະເສີນພຣະເຈົ້າສຳລັບການກະທຳຣາຊກິດຂອງພຣະອົງຢູ່ອ້ອມຮອບຕົວທ່ານ.

- **ຈົ່ງບອກ.** "ເຣື່ອງຂອງພຣະເຈົ້າ" ທີ່ຍິ່ງໃຫຍ່ທີ່ສຸດທີ່ຊ່ວຍຊີວິດຂອງຂ້າພະເຈົ້າແມ່ນຕອນທີ່ພຣະເຢຊູໄດ້ຊ່ວຍຂ້າພະເຈົ້າໃຫ້ພົ້ນຈາກບາບຂອງຂ້າພະເຈົ້າ. ຖ້າທ່ານເປັນຜູ້ເຊື່ອ, ທ່ານກໍມີຄຳພະຍານທີ່ຄ້າຍຄືກັນ. ຂນະທີ່ແຕ່ລະເຣື່ອງລາວມີເອກະລັກສະເພາະ, ພວກມັນແຕ່ລະອັນມີພຣະເຢຊູຄຣິດເປັນສູນກາງ, ການຊ່ວຍຄົນບາບທີ່ຮາກເຫງົ້າຂອງພວກເຂົາ. ບອກຄຳພະຍານຂອງທ່ານກັບບາງຄົນໃນອາທິດນີ້.

ເມື່ອບາງຄົນທີ່ໃກ້ຊິດກັບພວກເຮົາກຳລັງທົນທຸກທໍຣະມານ, ມັນນຳໃຊ້ຄວາມຄິດຂອງພວກເຮົາແລະພວກເຮົາກໍຊອກຫາຜູ້ທີ່ສາມາດຊ່ວຍໄດ້ຢ່າງຮີບຮ້ອນ. ມັນເປັນການດີທີ່ຮູ້ວ່າໃນເວລານັ້ນມີພຣະເຈົ້າຜູ້ຮັກເຮົາແລະພ້ອມທີ່ຈະຕອບສນອງຄວາມຕ້ອງການຂອງພວກເຮົາ. ນັ້ນເປັນຄວາມຈິງໂດຍສະເພາະເມື່ອເວົ້າເຖິງຄວາມຕ້ອງການອັນເລິກເຊິ່ງຂອງຫົວໃຈຂອງເຮົາ.

**ອຸປຖັມໂດຍລາວຊາວເທິນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ VR**